ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນະຄອນຫຼວງວຽງຈັນ**

ຄະນະບໍລິຫານງານພັກ

ເລກທີ: 0760 /ຄພ.ນວ.

ວັນທີ: 23 FEB 2016

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ຄັ້ງທີ 2 ສະໄໝທີ VI ເປີດກວ້າງ, (ວັນທີ 08 ມັງກອນ 2016)

ກອງປະຊຸມຄົບຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ໄດ້ຈັດຂຶ້ນໃນວັນທີ 08 ມັງກອນ 2016, ເວລາ 08:00 ໂມງ ເປັນຕົ້ນໄປ, ທີ່ຫ້ອງປະຊຸມທັນສະໄໝ ຊັ້ນ 1 ຂອງຫ້ອງວ່າການປົກຄອງ ນວ ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ດຣ. ສິນລະວົງ ຄຸດໄພທູນ, ເລຂາຄະນະພັກ-ເຈົ້າຄອງນະຄອນຫຼວງວຽງຈັນ, ມີບັນດາກຳມະການຄະນະປະຈຳ, ກຳມະການຄະນະພັກ, ເລຂາໜ່ວຍພັກຄະນະພັກຮາກຖານ, ໜ່ວຍພັກພະແນກການ, ອົງການທຽບເທົ່າອ້ອມຂ້ອງນະຄອນຫຼວງວຽງຈັນ ເຂົ້າຮ່ວມທັງໝົດ 60 ສະຫາຍ, ຍິງ 08 ສະຫາຍ. ກອງປະຊຸມໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ພິຈາລະນາບາງບັນຫາ ດັ່ງນີ້:

I. <u>ກ່ຽວກັບສະພາບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງນະຄອນຫຼວງວຽງຈັນ ໃນງວດ I ແລະ ທິດທາງມາດຕະການຈັດຕັ້ງປະຕິບັດ ໃນງວດ II ຂອງສົກປີ 2015-2016</u>, ລາຍງານໂດຍພະແນກແຜນການ-ການລົງທຶນ, ພະແນກການເງິນ ນວ, ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1. ໂດຍພື້ນຖານ ເຫັນດີຮັບຮອງເອົາບົດລາຍງານ ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງນະຄອນຫຼວງວຽງຈັນ ໃນງວດ I ແລະ ທິດທາງມາດຕະການຈັດຕັ້ງປະຕິບັດ ໃນງວດ II ຂອງສົກປີ 2015-2016 ຂອງທັງສອງພະແນກດັ່ງກ່າວ, ແຕ່ໃຫ້ເອົາໃຈໃສ່ຕື່ມດັ່ງນີ້:

1.1. **ກ່ຽວກັບແຜນພັດທະນາ:** ເຫັນວ່າປະຕິບັດໄດ້ດີພູດຂອງລັດຖະບານມອບໃຫ້, ແຕ່ອັນນັ້ນ ແມ່ນຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາຕົວຈິງ; ສະນັ້ນ ໃຫ້ສົ່ງເສີມການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ແຂງແຮງຂຶ້ນຕື່ມ ມີການລົງທຶນຈຶ່ງມີລາຍຮັບ ມີວຽກເຮັດງານທຳ, ຕໍ່ໄປນີ້ ໃຫ້ຂຶ້ນທະບຽນແກ້ໄຂບັນຫາຂໍ້ຂັດແຍ່ງ ແລະ ຄະດີຄວາມຕ່າງໆ ກ່ຽວກັບໂຄງການລົງທຶນຢ່າງຕັ້ງໜ້າ, ຖ້າໂຄງການໃດບໍ່ສາມາດເຮັດຕໍ່ ກໍ່ໃຫ້ລົບລ້າງ, ຕົວຢ່າງ: ການປຸກສ້າງອາຄານສຳນັກງານສູນກາງສະຫະພັນກຳມະບານເກົ່າ ປະຮ້າງໄວ້ດົນແລ້ວ ໃຫ້ເຊີນມາເວົ້າຄັກແນ່ ວ່າຈະເຮັດຕໍ່ ຫຼື ຊິເຊົາແລ້ວ. ການຄຸ້ມຄອງການລົງທຶນ ໃຫ້ເຮັດຕາມລະບຽບຫຼັກການ ແລະ ກົດໝາຍທີ່ໄດ້ກຳນົດໄວ້, ພະແນກແຜນການ

ແລະ ການລົງທຶນ ເປັນຜູ້ອະນຸມັດ ແຕ່ຂະແໜງການກ່ຽວຂ້ອງ ຕ້ອງຄຸ້ມຄອງຂອງໂຄງການ ແລະ ຜູ້ລົງທຶນ ຕົວຈິງ.

- ໃຫ້ທຸກພາກສ່ວນຮີບຮ້ອນ ສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສຳລັບ ສົກປີໃໝ່ 2016-2017 ໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງ ວຽງຈັນ ເພື່ອໃຫ້ທັນສະເໜີລັດຖະບານ ແລະ ສະພາແຫ່ງຊາດຮັບຮອງເອົາ.

- ໃຫ້ຮີບຮ້ອນຄົ້ນຄວ້າດັດແກ້ ແຜນການລົງທຶນ ແລະ ແຜນງົບປະມານ ຂອງນະຄອນຫຼວງວຽງຈັນ ໃນ 6 ເດືອນ ທ້າຍສົກປີ 2015-2016, ຊຶ່ງມີຫຼາຍວຽກທີ່ຈຳເປັນຕ້ອງໄດ້ເຮັດ ແຕ່ຍັງບໍ່ທັນມີແຜນທຶນ-ແຜນ ເງິນ ມາຈັດຕັ້ງປະຕິບັດເຊັ່ນ: ການເປັນເຈົ້າພາບຈັດກອງປະຊຸມ ບັນດາເຈົ້າຄອງນະຄອນອາຊຽນ ຄັ້ງທີ 4, ການປັບປຸງສ້ອມແປງເສັ້ນທາງທີ່ເປ່ເພ, ໂຄງການກະກຽມໃຫ້ບັນດາເຈົ້າຄອງນະຄອນຫຼວງອາຊຽນ ໄປຢ້ຽມ ຢາມ ແລະ ໂຄງການທີ່ຈຳເປັນເລັ່ງດ່ວນອື່ນໆ ຕ້ອງໄດ້ຈັດສັນທຶນໃສ່ກ່ອນ.

1.2. **ກ່ຽວກັບແຜນງົບປະມານ:** ນະຄອນຫຼວງວຽງຈັນ ຮັບຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍ ງົບປະມານ ທີ່ສູນກາງມອບໃຫ້ງບັນລຸ, ໂດຍຈະເນັ້ນໃສ່ ປະຕິບັດບັນດາມາດຕະການສຳຄັນ ດັ່ງນີ້: ກຸ້ມຕົນ ເອງທາງດ້ານການເງິນ, ກາຍເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ພັດທະນາ. **ຕົວຢ່າງ:** ການຊອກເຫັນ ຖານລາຍຮັບໃໝ່ ແມ່ນມອບໃຫ້ຫົວໜ່ວຍທີ່ຊອກເຫັນ 100%, ການຊອກເຫັນຖານບັນຊີລາຍຮັບເພີ່ມຂຶ້ນໃໝ່ ແມ່ນແບ່ງໃຫ້ຫົວໜ່ວຍຊອກເຫັນ 50% ໃນ3 ປີຊ້ອນ ເພື່ອເປັນການກະຕຸກຊຸກຍູ້ຄວາມບຸກບືນຫ້າວຫັນ, ມີ ຈິດໃຈຢາກຂຸດຄົ້ນແຫຼ່ງລາຍຮັບໃຫ້ໄດ້ຄົບຖ້ວນ ແລະ ໂປ່ງໃສ.

II. **ພິຈາລະນາກ່ຽວກັບ ການຈັດຮັບ-ຈັດຈ່າຍ ການນຳໃຊ້ເງິນຂອງຕະຫຼາດທາດຫຼວງ**, ລາຍງານໂດຍ ພະແນກ ການເງິນ ນວ, ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1. **ຄວາມຈຳເປັນ ແລະ ເຫດຜົນ:**

1.1. ທາງບໍລິສັດ ຈິດຈະເລີນ ຂໍຮ້ອງໃຫ້ນະຄອນຫຼວງວຽງຈັນ ແກ້ໄຂໜີ້ສິນ ທີ່ນະຄອນຫຼວງວຽງຈັນ ເປັນໜີ້ບໍລິສັດຫຼວງຫຼາຍ.

1.2. ທີ່ດິນຕະຫຼາດທາດຫຼວງ ນະຄອນຫຼວງວຽງຈັນ ໄດ້ເກັບຄ່າສຳປະທານນຳບໍລິສັດໝົດແລ້ວ 70 ປີ, ລໍຖ້າອີກ 71 ປີ ນະຄອນຫຼວງວຽງຈັນ ຈຶ່ງຈະໄດ້ຄ່າສຳປະທານໃໝ່ນຳບໍລິສັດ.

1.3. ຢາກແກ້ໄຂໜີ້ສິນກັບບໍລິສັດ ແລະ ໄດ້ເງິນຕື່ມຈາກບໍລິສັດ ມາຈັດສັນຄວາມເປັນລະບຽບຮຽບ ຮ້ອຍ, ຈັດສັນຕະຫຼາດ, ແກ້ໄຂຄວາມແອອັດ, ລົດຕິດ ຢູ່ຕະຫຼາດທາດຫຼວງ ແລະ ເສັ້ນທາງຫົວຂົວ.

1.4. ເງິນທີ່ໄດ້ຈາກບໍລິສັດ ເຫຼືອໃຊ້ໜີ້ແລ້ວ ຈະເອົາໄປຊື້ທີ່ດິນຕອນໃໝ່ສ້າງຕະຫຼາດຂາຍຍົກ, ຕະຫຼາດສົດ ຂອງເມືອງໄຊເສດຖາ, ຍ້າຍຕະຫຼາດ ທ່ານ ບົວສອນ ແລະ ຈັດສັນຕະຫຼາດ ປ້າ ຈັນເທົາ ໃຫ້ ເປັນທັນສະໄໝ.

2. **ຜ່ານການພິຈາລະນາ ກອງປະຊຸມມີມະຕິຕົກລົງ ເປັນເອກະພາບນຳກັນ ດັ່ງນີ້:**

2.1. ເຫັນດີ ໃຫ້ທັນດິນຕະຫຼາດທາດຫຼວງ.

2.2. ເຫັນດີ ໃຫ້ຈັດຮັບ-ຈັດຈ່າຍເອົາເຂົ້າງົບປະມານ ແລະ ກອງທຶນພັນທະນານະຄອນຫຼວງວຽງຈັນ ຄື: ❶ ໃຊ້ໜີ້ບໍລິສັດຈິດຈະເລີນ, ❷ ສ້າງຕະຫຼາດເມືອງໄຊເສດຖາ, ❸ ຂະຫຍາຍຂົວ ຫົວຂົວ, ❹ ຊົດເຊີຍ ຄ່າເວນຄືນທີ່ດິນຄ່າສິ່ງປຸກສ້າງຕ່າງໆ ຢູ່ເຂດຈະສ້າງວົງວຽນ ຫຼັກ 6, ❺ ລົງທຶນເປັນຮຸ້ນ ສ້າງຮ້ານຄ້າຢູ່ ນະຄອນຫຼວງຮ່າໂນ້ຍ, ❻ ຍັງເຫຼືອເທົ່າໃດມອບເຂົ້າກອງທຶນພັດທະນາ ນະຄອນຫຼວງວຽງຈັນ.

III. <u>ພິຈາລະນາຮັບຮອງເອົາ ມະຕິຕົກລົງຂອງອົງການປົກຄອງນະຄອນຫຼວງວຽງຈັນ ກ່ຽວກັບການສ້າງຕັ້ງກອງທຶນທາງ ນະຄອນຫຼວງວຽງຈັນ</u>, ລາຍງານໂດຍ ພະແນກໂຍທາທິການ ແລະ ຂົນສົ່ງ ນວ, ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1. ເຫັນດີອອກມະຕິຕົກລົງ ຂອງຄະນະບໍລິຫານງານພັກນະຄອນຫຼວງວຽງຈັນ ຮັບຮອງເອົາຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການສ້າງຕັ້ງກອງທຶນທາງນະຄອນຫຼວງວຽງຈັນ.

2. ເຫັນວ່າການສ້າງຕັ້ງກອງທຶນດັ່ງກ່າວ ແມ່ນມີຄວາມຈຳເປັນຄື:

2.1. ຍ້ອນເສັ້ນທາງຢູ່ນະຄອນຫຼວງວຽງຈັນເປ່ເພຫຼາຍ ບໍ່ມີເງິນພຽງພໍມາສ້ອງແປງ, ງົບປະມານທີ່ໄດ້ຮັບແຕ່ລະປີແມ່ນບໍ່ເຖິງ 2 ຕື້ກີບ, ແຕ່ຄວາມຕ້ອງການເງິນມາບູລະນະສ້ອມແປງ ຫຼາຍກວ່າຫຼາຍເທົ່າ.

2.2. ຍ້ອນຂາດງົບປະມານ ຈຶ່ງມີຄວາມຈຳເປັນຕ້ອງໄດ້ລະດົມຈາກປະຊາຊົນ, ເປັນຕົ້ນຜູ້ທີ່ຢູ່ໃນເທດສະບານ, ມີພົນລະເມືອງໜາແໜ້ນ, ມີປະລິມານລົດທຸງວທາງແອອັດ; ສ່ວນຢູ່ນອກເທດສະບານອອກໄປແມ່ນຈະບໍ່ໄດ້ເກັບ, ການເກັບແບບເອົາຕົວເມືອງລ້ຽງຕົວເມືອງນີ້ ແມ່ນມີຄວາມຍືນຍົງ.

2.3. ຮັບໃຊ້ເປົ້າໝາຍການພັດທະນານະຄອນຫຼວງວຽງຈັນ ໃຫ້ຫຼຸດພົ້ນອອກຈາກນະຄອນດ້ອຍພັດທະນາ ໂດຍສະເພາະດ້ານໂຄງລ່າງ ໃນ 10 ຕໍ່ໜ້ານີ້, ເພື່ອປັບລຸດຕົວຊີ້ວັດຄວາມດ້ອຍພັດທະນາ ດ້ານໂຄງລ່າງ.

3. ກອງປະຊຸມເຫັນວ່າການສ້າງຕັ້ງກອງທຶນທາງນະຄອນຫຼວງວຽງຈັນ ແມ່ນມີຄວາມເປັນໄປໄດ້ ຫາກຊາວນະຄອນຫຼວງວຽງຈັນ ມີຄວາມພ້ອມພຽງໃຈກັນ, ຍ້ອນວ່າ:

3.1. ທາງແມ່ນເຮັດໃຫ້ລົດແລ່ນ, ຜູ້ເຮັດໃຫ້ທາງເປ່ເພແມ່ນລົດ, ສະນັ້ນ ຜູ້ມີລົດຈະຕ້ອງໄດ້ຈ່າຍ, ຜ່ານມາກໍ່ໄດ້ຈ່າຍແດ່ແລ້ວ ແຕ່ຍັງບໍ່ທັນພຽງພໍກັບການພັດທະນາເສັ້ນທາງຢູ່ໃນຕົວເມືອງ ຊຶ່ງກາຍເປັນເທດສະບານ ນັບມື້ໃຫຍ່ ແລະ ທັນສະໄໝ, ຜູ້ມີລົດລ້ວນແຕ່ມີເງິນ ແລະ ຢາກໄດ້ເສັ້ນທາງທີ່ດີໄວ້ແລ່ນລົດ.

3.2. ຢາກເຮັດເປັນກົດໝາຍອາກອນຕົວເມືອງ (Tax-City) ປ່ຽນແທນການລະດົມ ຊຶ່ງມີຢ່າງໜ້ອຍ 24 ລາຍການຕ້ອງເກັບ, ແຕ່ຕ້ອງໃຊ້ເວລາຫຼາຍ ເພື່ອຮ່າງ ແລະ ສະເໜີປະກາດໃຊ້, ເຫັນວ່າຖ້າບໍ່ໄດ້. ເສັ້ນທາງນັບມື້ເປ່ເພ, ຈຶ່ງສ້າງເປັນຂໍ້ຕົກລົງຂອງອົງການປົກຄອງນະຄອນຫຼວງວຽງຈັນ ຫຼື ດຳລັດຂອງລັດຖະບານກ່ອນ ໂດຍອີງໃສ່ຊ່ອງທາງ ຕາມມາດຕາ 4, ຂໍ້ 7.4 ຂອງດຳລັດ ວ່າດ້ວຍກອງທຶນທາງ ສະບັບເລກທີ 04/99/ສພຊ, ລົງວັນທີ 03 ເມສາ 1999 ທີ່ກຳນົດແຫຼ່ງລາຍຮັບກອງທຶນທາງ ຈາກການປະກອບສ່ວນຂອງປະຊາຊົນ ແລະ ສັງຄົມ.

4. ແຫຼ່ງລາຍຮັບຂອງກອງທຶນ ໃຫ້ເກັບນຳດັ່ງນີ້:

4.1. ເກັບນຳລົດໃຫຍ່, ລົດຈັກທຸກຊະນິດ ໂດຍແບ່ງເປັນ 3 ປະເພດຄື: ສູງ, ກາງ, ຕ່ຳ.

4.2. ເກັບນຳຜູ້ມີທີ່ດິນ ແລະ ເຮືອນ ຢູ່ໃນຕົວເມືອງເທດສະບານ ປະມານ 300 ບ້ານ ທົ່ວນະຄອນຫຼວງວຽງຈັນ.

5. ເປົ້າໝາຍການນຳໃຊ້ຂອງກອງທຶນ ມີດັ່ງນີ້:

5.1. ແປງທາງຮ່ອມ, ທາງຊອຍ ທີ່ກອງທຶນທາງຫຼວງຂອງລັດຖະບານ ບໍ່ກວມເອົາ.

5.2. ເປັນທຶນສົມທົບກໍ່ສ້າງເສັ້ນທາງຮ່ອມ, ທາງຊອຍ ໂດຍໃຫ້ບ້ານ ແລະ ຊຸມຊົນທີ່ອອກທຶນສົມທົບຫຼາຍກວ່າໝູ່.

5.3. ແກ້ໄຂໜີ້ສິນການກໍ່ສ້າງເສັ້ນທາງໃນນະຄອນຫຼວງວຽງຈັນ ຜ່ານມາທີ່ຍັງບໍ່ທັນມີແຫຼ່ງທຶນຊຳລະ.

6. ກົນໄກການຈັດຕັ້ງປະຕິບັດ ແມ່ນ:

6.1. ເປົ້າໝາຍເຮັດຢູ່ຕາມເສັ້ນທາງເທດສະບານ ຊຶ່ງກວມເອົາປະມານ 300 ບ້ານ ກ່ອນ.

6.2. ເອົາພາກເອກະຊົນ ແລະ ຕົວແທນຈາກສັງຄົມ ເຂົ້າມາຮ່ວມບໍລິຫານກອງທຶນຢ່າງເປີດເຜີຍ ແລະ ມີຄວາມໂປ່ງໃສ.

<u>IV. ກອງປະຊຸມໄດ້ຮັບຟັງການເຜີຍແຜ່ ແລະ ເຊື່ອມຊຶມມະຕິ ແລະ ເອກະສານສຳຄັນຕ່າງໆຂອງພັກ ແລະ ລັດ ດັ່ງນີ້:</u>

4.1. ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 11 ສະໄໝທີ IX, ເຜີຍແຜ່ໂດຍ ສະຫາຍ ເລຂາຄະນະພັກ ນະຄອນຫຼວງວຽງຈັນ.

4.2. ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII, ເຜີຍແຜ່ ໂດຍ ສະຫາຍ ລາດຊະນີວົງ ອະມະຣະທິທາດາ, ກຳມະການຄະນະປະຈຳພັກ, ປະທານກວດກາພັກ, ຫົວໜ້າພະແນກກວດກາລັດ ນວ.

**V. ກອງປະຊຸມໄດ້ປຶກສາຫາລື ແລະ ຮັບຮອງເອົາແຜນວຽກຈຸດສຸມ ໃນງວດ 2 ຂອງສົກປີ 2015-2016 ຂອງອົງຄະນະພັກນະຄອນຫຼວງວຽງຈັນ.**

ພື້ນຖານເຫັນດີຕາມການລາຍງານ ຂອງຫົວໜ້າຫ້ອງວ່າການປົກຄອງ ນວ, ແຕ່ໃຫ້ສຸມໃສ່ບາງແຜນວຽກຕື່ມ ດັ່ງນີ້:

**5.1.** ສຸມໃສ່ກະກຽມຮັບໃຊ້ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ເພື່ອຮັບປະກັນໃຫ້ມີຄວາມສະຫງົບ ປອດໄພ 100%.

**5.2.** ເອົາໃຈໃສ່ເຮັດໃຫ້ນະຄອນຫຼວງວຽງຈັນ ເປັນນະຄອນທີ່ມີຄວາມສະຫງົບ, ສະອາດ, ສະຫວ່າງ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

**5.3.** ສ້າງຂະບວນການ ເພື່ອຕ້ອນຮັບກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ກະກຽມກ້ອນມອບຊົນເຂົ້າອວຍພອນກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ.

**5.4.** ກະກຽມຈັດການໂຮມຊຸມນຸມມິດຕິ້ງ ເພື່ອຊົມເຊີຍກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ.

**5.5.** ສືບຕໍ່ນຳພາຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງນະຄອນຫຼວງວຽງຈັນ ໃນງວດ II ສົກປີ 2015-2016 ໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້.

**5.6.** ສືບຕໍ່ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ.

**ຕາງໜ້າ ຄະນະບໍລິຫານງານພັກນະຄອນຫຼວງວຽງຈັນ**

**ເລຂາຄະນະພັກ**

**ສິຫຸນ ສິດທິລືໄຊ**

<u>**ບ່ອນສົ່ງ:**</u>

- ຄະນະບໍລິຫານງານພັກ ນວ ສະຫາຍລະ 01 ສະບັບ
- ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກພະແນກການ ແລະ ອົງການທຽບເທົ່າພະແນກ ບ່ອນລະ 01 ສະບັບ
- ເກັບມ້ຽນສຳເນົາ 02 ສະບັບ